# ມະຕິ

# ກອງປະຊຸມຄົບຄະນະ ຄັ້ງທີ 3 ຂອງຄະນະ ບໍລິຫານງານສູນກາງພັກ ສະໄໝທີ XI

ນະຄອນຫຼວງວຽງຈັນ, ວັນທີ 18-22 ຕຸລາ 2021

## ມະຕິ
## ກອງປະຊຸມຄົບຄະນະ ຄັ້ງທີ 3
## ຂອງຄະນະບໍລິຫານງານສູນກາງພັກ ສະໄໝທີ XI

ຄະນະບໍລິຫານງານສູນກາງພັກ ສະໄໝທີ XI ໄດ້ດຳເນີນ ກອງປະຊຸມຄົບຄະນະ ຄັ້ງທີ 3 ແຕ່ວັນທີ 18 ເຖິງວັນທີ 22 ຕຸລາ 2021 ທີ່ສຳນັກງານສູນກາງພັກ ນະຄອນຫຼວງວຽງຈັນ, ພາຍໃຕ້ການເປັນປະທານຂອງ ສະຫາຍ ທອງລຸນ ສີສຸລິດ ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກປະຊາຊົນປະຕິວັດລາວ ເຊິ່ງມີບັນດາສະຫາຍກຳມະການສູນກາງພັກ ເຂົ້າຮ່ວມ ຢ່າງພ້ອມພຽງ ໂດຍໄດ້ປະຕິບັດມາດຕະການປ້ອງກັນການແຜ່ລະບາດ ຂອງພະຍາດໂຄວິດ-19 ຢ່າງເຂັ້ມງວດ;

ກອງປະຊຸມຄັ້ງນີ້ ໄດ້ສຸມໃສ່ກວດກາ, ຕີລາຄາ ສະພາບການພັນຂະຫຍາຍ ແລະ ການຈັດຕັ້ງປະຕິບັດ ມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX ແລະ ວຽກງານສຳຄັນຈຳນວນໜຶ່ງ ເຊິ່ງມີດັ່ງນີ້:

**1. ຕີລາຄາສະພາບການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ ແລະ ແຜນເງິນຕາ 9 ເດືອນຜ່ານມາ, ມາດຕະການຈັດຕັ້ງປະຕິບັດແຜນ ໃນໄຕມາດສຸດທ້າຍ ປີ 2021 ແລະ ທິດທາງແຜນການ ປີ 2022.**

ກອງປະຊຸມ ເຫັນວ່າ ໃນທ່າມກາງສະພາບແວດລ້ອມ ທີ່ມີຄວາມຫຍຸ້ງຍາກຫຼາຍປະການ, ສູນກາງພັກ ແລະ ບັນດາອົງການໃນລະບົບການເມືອງແຕ່ລະຂັ້ນ ໄດ້ຍົກສູງຄວາມຮັບຜິດຊອບ ແລະ ເອົາໃຈໃສ່ນຳພາຊີ້ນຳ ການຈັດຕັ້ງປະຕິບັດແຜນການ ປະຈຳປີ 2021 ໂດຍໄດ້ຫັນເຂົ້າສູ່ວຽກງານຕົວຈິງ ດ້ວຍການວາງນະໂຍບາຍ, ກົນໄກ, ນິຕິກຳ ທີ່ລະອຽດ, ຈະແຈ້ງ ແລະ ສອດຄ່ອງກັບສະພາບຕົວຈິງ, ອັນພົ້ນເດັ່ນ ແມ່ນໄດ້ຍົກລະດັບການແກ້ໄຂບັນຫາຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແລະ ການແກ້ໄຂບັນຫາຢາເສບຕິດ ເປັນວາລະແຫ່ງຊາດ, ພ້ອມທັງໄດ້ສຸມໃສ່ປ້ອງກັນ, ຄວບຄຸມ ແລະ ສະກັດກັ້ນ ການແຜ່ລະບາດ ຂອງພະຍາດ Covid-19 ຢ່າງຕັ້ງໜ້າ ເພື່ອຮັບປະກັນຊີວິດ ແລະ ສຸຂະພາບ ຂອງປະຊາຊົນ ກໍຄື ແກ້ໄຂຜົນກະທົບຕໍ່ການພັດທະນາເສດຖະກິດ-ສັງຄົມ, ສາມາດຮັບປະກັນສະຖຽນລະພາບ ທາງດ້ານການເມືອງ ໄວ້ໄດ້ຢ່າງໝັກແໜ້ນ, ການພັດທະນາເສດຖະກິດ-ສັງຄົມ ຢູ່ປະເທດເຮົາ ສືບຕໍ່ດຳເນີນໄປຢ່າງຕໍ່ເນື່ອງ, ອັດຕາການເຕີບໂຕລວມຍອດຜະລິດຕະພັນພາຍໃນ (GDP) ຄາດຄະເນວ່າ ຈະຂະຫຍາຍຕົວໃນລະດັບ 2,8%. ພ້ອມກັນນັ້ນ ສູນກາງພັກ ກໍເຫັນແຈ້ງຂໍ້ຄົງຄ້າງທີ່ຕ້ອງໄດ້ສຸມໃສ່ແກ້ໄຂ ຢ່າງເອົາຈິງເອົາຈັງ ແລະ ເປັນລະບົບ ຄື: ອັດຕາແລກປ່ຽນ, ອັດຕາເງິນເຟີ້, ຄ່າຄອງຊີບ, ບັນຫາໜີ້ສິນສາທາລະນະ, ເກັບລາຍຮັບງົບປະມານ, ການຄຸ້ມຄອງ-ຈັດຫາວຽກເຮັດງານທຳ, ການຊຸກຍູ້ສົ່ງເສີມການຜະລິດ ບໍ່ທັນບັນລຸຕາມຄາດໝາຍຕາມແຜນການ ທີ່ວາງໄວ້;

ຄະນະບໍລິຫານງານສູນກາງພັກ, ໂດຍພື້ນຖານ ເຫັນດີຕາມການສະເໜີ ຂອງລັດຖະບານ ແລະ ໄດ້ໃຫ້ທິດຊີ້ນຳ ການສືບຕໍ່ຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ ແລະ ແຜນເງິນຕາ ໃນໄຕມາດສຸດທ້າຍ ປີ 2021 ແລະ ທິດທາງແຜນການ ປີ 2022 ເຊິ່ງຄາດໝາຍໃຫຍ່ ແມ່ນຕ້ອງຮັບປະກັນສະຖຽນລະພາບ ຂອງເສດຖະກິດມະຫາພາກ, ບໍ່ໃຫ້ເກີດວິກິດການດ້ານການເງິນ-ເງິນຕາ ແລະ ຮັກສາຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ໃນ

ສັງຄົມ, ສຸມໃສ່ຟື້ນຟູເສດຖະກິດ-ສັງຄົມ, ແບບວິຖີຊີວິດໃໝ່ ໃນສະພາບໂຄວິດ-19 ໃຫ້ເຂົ້າສູ່ລະບົບໂດຍໄວ ແລະ ມີໂສມໜ້າຫັນປ່ຽນໃໝ່ ໂດຍຈັດຕັ້ງປະຕິບັດບາງມາດຕະການ ເພື່ອແກ້ໄຂບັນຫາທີ່ເປັນບູລິມະສິດ ຢ່າງມີຈຸດສຸມ ເປັນຕົ້ນແມ່ນ ການຈັດເກັບລາຍຮັບງົບປະມານ ໃຫ້ເຂົ້າສູ່ລະບົບ, ໂປ່ງໃສ ແລະ ໄປຕາມທິດທັນເປັນທັນສະໄໝ, ຄຸ້ມຄອງລາຍຈ່າຍ ໃຫ້ຮັດກຸມ ແລະ ມີປະສິດທິຜົນ, ຕັດສິນໃຈສູງປະຕິບັດການປະຫຍັດ ແລະຕ້ານການຟຸມເຟືອຍ ຂອງລັດ, ບໍລິຫານຈັດການໜີ້ສິນ ຢ່າງເປັນລະບົບ ແລະ ແກ້ໄຂໃຫ້ຕົກໄປເປັນກ້າວໆ ທັງເດັດຂາດບໍ່ໃຫ້ເກີດໜີ້ສິນຄຸມເຄືອຂຶ້ນຕື່ມ, ຄຸ້ມຄອງລະບົບເງິນຕາມະຫາພາກ ໃຫ້ຮັດກຸມ ແລະ ເຂັ້ມງວດຕື່ມ, ຮັບປະກັນສະຖຽນລະພາບດ້ານເງິນຕາ, ປັບປຸງລັດວິສາຫະກິດ ໃຫ້ຫຼຸດພົ້ນຈາກສະພາບວິກິດ ແລະ ເຂັ້ມແຂງຂຶ້ນ, ເອົາໃຈໃສ່ຍູ້ແຮງການຜະລິດ ເພື່ອຮັບໃຊ້ພາຍໃນ ແລະ ສົ່ງອອກຕ່າງປະເທດ ຕິດພັນກັບການນໍາໃຊ້ບັນດາທ່າແຮງ ແລະ ເງື່ອນໄຂທີ່ເອື້ອອໍານວຍ ຈາກເສັ້ນທາງລົດໄຟ ລາວ-ຈີນ ໃຫ້ເກີດຜົນປະໂຫຍດສູງສຸດ, ສືບຕໍ່ແກ້ໄຂການລະບາດ ຂອງພະຍາດ ໂຄວິດ-19 ຕາມທິດທາງປົກປ້ອງຊີວິດ ແລະ ສຸຂະພາບ ຂອງປະຊາຊົນ ໄປຄຽງຄູ່ກັບການສ້າງທຸກເງື່ອນໄຂ ໃຫ້ແກ່ການດໍາລົງຊີວິດ, ການເຄື່ອນໄຫວ ການຜະລິດ, ການບໍລິການ ຕາມວິຖີຊີວິດແບບໃໝ່ ຢ່າງເປັນປົກກະຕິ ໂດຍສູ້ຊົນທາທຸກວິທີການ ເພື່ອໃຫ້ພົນລະເມືອງ ໄດ້ຮັບການສັກວັກແຊັງຫຼາຍກວ່າເຄິ່ງໜຶ່ງ ຂອງປະຊາກອນທັງໝົດ;

ກອງປະຊຸມ ມອບໃຫ້ລັດຖະບານ ສົມທົບກັບຄະນະປະຈໍາສະພາແຫ່ງຊາດ ພ້ອມກັນກວດຄືນບັນດາຂໍ້ມູນ, ຕົວເລກ, ຄາດໝາຍສູ້ຊົນແຕ່ລະດ້ານ ໃຫ້ຮັດກຸມ, ຈະແຈ້ງ ແລະ ມີຄວາມສາມາດຈັດຕັ້ງປະຕິບັດໄດ້ໃນຕົວຈິງ ເພື່ອສະເໜີໃຫ້ກອງປະຊຸມສະພາແຫ່ງຊາດ ພິຈາລະນາ, ຮັບຮອງເອົາຕາມກົດໝາຍ. ມອບໝາຍໃຫ້ລັດຖະບານ ກໍຄືຄະນະພັກ, ອົງການປົກຄອງແຕ່ລະຂັ້ນສືບຕໍ່ຊີ້ນໍາແກ້ໄຂ ຂໍ້ຄົງຄ້າງຕ່າງໆ ດ້ວຍຈິດໃຈບຸກທະລຸ ຢ່າງແຂງແຮງ ເພື່ອສ້າງພື້ນຖານອັນໜັກແໜ້ນ ໃຫ້ແກ່ການສືບຕໍ່ຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ, ແຜນເງິນຕາ ໃນໄຕມາດສຸດທ້າຍປີ 2021 ແລະ ວາງແຜນປະຈໍາປີ 2022 ບົນພື້ນຖານ ມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ ແລະ ແຜນການພັດທະນາ ເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX ໂດຍສຸມໃສ່ຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ, ການຫັນປ່ຽນຢ່າງແຂງແຮງ, ເລິກເຊິ່ງ ໃນວຽກງານພະນັກງານ ໃຫ້ບັນລຸຕາມຄາດໝາຍວາງໄວ້.

**2. ກ່ຽວກັບສະພາບການ ຂອງພາກພື້ນ ແລະ ສາກົນ, ສະພາບການຈັດຕັ້ງປະຕິບັດແນວທາງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.**

ຄະນະບໍລິຫານງານສູນກາງພັກ ໄດ້ຢືນຢັນວ່າ: ສະພາບແວດລ້ອມ ຢູ່ພາກພື້ນ ແລະສາກົນ ສືບຕໍ່ພັນແປໄປຢ່າງສະຫຼັບສັບຊ້ອນ ໂດຍສະເພາະ ອັນທີ່ພົ້ນເດັ່ນໃນໄລຍະມໍ່ໆມານີ້ ແມ່ນເກີດມີສະພາບຄວາມເຄັ່ງຮ້ອນ ແລະ ຫໍ່ແຫຼມໃນຫຼາຍດ້ານ; ໂລກກໍາລັງປະເຊີນໜ້າກັບການປ່ຽນແປງຢ່າງໃຫຍ່ຫຼວງ ທາງທໍາມະຊາດ ເປັນຕົ້ນແມ່ນ ບັນຫາໂລກຮ້ອນ, ການແຜ່ລະບາດ ຂອງພະຍາດໂຄວິດ-19 ທີ່ຍັງມີທ່າອຽງແກ່ຍາວ ແລະ ສ້າງຜົນກະທົບເປັນວົງກວ້າງ ຕໍ່ການດໍາລົງຊີວິດຂອງປະຊາຊົນ ຢູ່ທົ່ວທຸກມຸມໂລກ; ຂໍ້ຂັດແຍ່ງທາງດ້ານການເມືອງ, ເສດຖະກິດ, ການທະຫານ... ໄດ້ກາຍເປັນສິ່ງທ້າທາຍໃໝ່ ຕໍ່ສັນຕິພາບ, ສະຖຽນລະພາບ ແລະ ຄວາມໝັ້ນຄົງ ຂອງໂລກ ກໍຄືຢູ່ຫຼາຍພາກພື້ນ; ບັນຫາເຫຼົ່ານັ້ນ ລ້ວນແຕ່ສົ່ງຜົນສະທ້ອນ ທັງທາງກົງ ແລະ ທາງອ້ອມ ຕໍ່ປະເທດເຮົາ. ແຕ່ພາຍໃຕ້ການນໍາພາ ຂອງພັກ ແລະ ການຄຸ້ມຄອງບໍລິຫານຂອງລັດ, ຄວາມເປັນຫຼັກແຫຼ່ງແກ່ນສານ ຂອງກໍາລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ຄວາມເປັນເຈົ້າ ຂອງ

ປະຊາຊົນລາວບັນດາເຜົ່າ ໃນການຈັດຕັ້ງປະຕິບັດ ແນວທາງປ້ອງກັນຊາດ-ປ້ອງກັນຄວາມສະຫງົບທົ່ວປວງຊົນຮອບດ້ານ ໄດ້ກາຍເປັນພະລັງ ທີ່ເຮັດໃຫ້ປະເທດຊາດ ສືບຕໍ່ຮັກສາໄດ້ສະຖຽນລະພາບທາງການເມືອງຢ່າງໜັກແໜ້ນ, ສັງຄົມມີຄວາມສະຫງົບປອດໄພ ແລະ ເປັນລະບຽບຮຽບຮ້ອຍ ໂດຍພື້ນຖານ, ສະກັດກັ້ນ, ຕີຖອຍທຸກການທຳລາຍມ້າງເພ ຂອງອິດທິກຳລັງປໍລະປັກ ແລະ ພວກຄົນບໍ່ດີ, ສ້າງເງື່ອນໄຂເອື້ອອຳນວຍ ໃຫ້ແກ່ການສ້າງສາພັດທະນາ ແລະ ສ້າງປະກົນປັດໄຈດ້ານຕ່າງໆ ໃນການສືບຕໍ່ນຳພາປະເທດຊາດ ໃຫ້ຫຼຸດພົ້ນຈາກສະຖານະພາບດ້ອຍພັດທະນາ ແລະ ກ້າວເດີນສູ່ຈຸດໝາຍສັງຄົມນິຍົມ;

ກອງປະຊຸມ ໄດ້ຢືນຢັນທັດສະນະ ແລະ ບົດຮຽນຖອດຖອນຈາກພຶດຕິກຳຕົວຈິງ ທີ່ຖືເອົາວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຕິດພັນກັບການພັດທະນາເສດຖະກິດ-ສັງຄົມ, ການປົກປັກຮັກສາສິ່ງແວດລ້ອມ ຢ່າງກົມກຽວ, ສົມທົບແໜ້ນວຽກງານການຕ່າງປະເທດ ກັບວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ເປັນປັດໄຈຕັດສິນຄວາມໝັ້ນຄົງ ຂອງປະເທດຊາດ. ບົນພື້ນຖານນັ້ນ ຄະນະບໍລິຫານງານສູນກາງພັກ ໄດ້ມີຄວາມເປັນເອກະພາບສູງດ້ວຍຄວາມຕັດສິນໃຈ ນຳພາຊີ້ນຳວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ວຽກງານການຕ່າງປະເທດ ໃນເງື່ອນໄຂສະພາບການໃໝ່ ເພື່ອເປັນເຈົ້າການ ກຽມພ້ອມຮັບມືກັບການພົນແປຕ່າງໆ ຢ່າງເປັນລະບົບ;

1). ຍຶດໝັ້ນ ແລະສືບຕໍ່ຈັດຕັ້ງປະຕິບັດແນວທາງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ທີ່ໄດ້ກຳນົດອອກໃນກອງປະຊຸມໃຫຍ່ຄັ້ງທີ XI ໃຫ້ເຂົ້າສູ່ລວງເລິກ ແລະ ເປັນຮູບປະທຳ ໂດຍສຸມໃສ່ບັນຫາສຳຄັນຕົ້ນຕໍ ຈຳນວນໜຶ່ງ ດັ່ງນີ້:

- ເດັດດ່ຽວເພີ່ມທະວີການນຳພາເດັດຂາດ, ໂດຍກົງ ແລະ ຮອບດ້ານ ຂອງຄະນະພັກແຕ່ລະຂັ້ນ ຕໍ່ກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;

- ປັບປຸງ ແລະ ກໍ່ສ້າງກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃຫ້ປອດໃສ, ເຂັ້ມແຂງ, ໜັກແໜ້ນ, ມີແບບແຜນທັນສະໄໝ, ເປັນກຳລັງປະຕິວັດປະຊາຊົນ ຢ່າງແທ້ຈິງ, ເປັນຜູ້ຈົງຮັກພັກດີ ຕໍ່ພັກ-ຕໍ່ອຸດົມການສັງຄົມນິຍົມ, ມີຈັນຍາບັນ, ຈັນຍາທຳ ແລະ ລະບຽບວິໄນເຂັ້ມງວດ, ເປັນກຳລັງຫຼັກແຫຼ່ງ, ເອົາການເອົາງານ ໃນການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ, ແກ້ໄຂອາວຸດເຖື່ອນ, ບັນຫາອາດຊະຍາກຳຕ່າງໆ; ເປັນທີ່ເພິ່ງທີ່ໄວ້ວາງໃຈ ຂອງປະຊາຊົນ; ເປັນກຳລັງຫຼັກແຫຼ່ງ ໃຫ້ແກ່ການພັດທະນາຊົນນະບົດ, ການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ດ້ວຍການສືບຕໍ່ມູນເຊື້ອເພີ່ມພູນພະລິດຜົນ, ສ້າງພະລາທິການກັບທີ່ ຕາມທິດນຳ "ເພິ່ງຕົນເອງ, ກຸ້ມຕົນເອງ ແລະ ສ້າງຄວາມເຂັ້ມແຂງ ດ້ວຍຕົນເອງ" ຫຼຸດຜ່ອນການແບກຫາບ ຂອງລັດຖະບານ; ປັບປຸງແບບແຜນວິທີການເຮັດວຽກ, ລະບອບການບັນຊາຊີ້ນຳ ແລະ ການຄຸ້ມຄອງ ດ້ານລະບຽບວິໄນ ກໍຄືແກ້ໄຂປະກົດການຫຍໍ້ທໍ້ ໃນສອງກຳລັງ ຢ່າງເຂັ້ມງວດ; ປັບປຸງກົນໄກ ແລະ ຂອດປະສານງານກັນ ລະຫວ່າງສອງກຳລັງ ຢູ່ແຕ່ລະຂັ້ນທີ່ຍັງບໍ່ໄລ່ງລຽນ ແລະ ບໍ່ທັນຄ່ອງຕົວ; ພ້ອມນັ້ນ ກໍເອົາໃຈໃສ່ປະກອບພາຫະນະ, ວັດຖຸເຕັກນິກ, ຍຸດໂທປະກອນ ທັນສະໄໝ ທີ່ຈຳເປັນ ຮັບໃຊ້ວຽກງານປ້ອງກັນ ຊາດ-ປ້ອງກັນຄວາມສະຫງົບ;

- ເພີ່ມທະວີການສຶກສາອົບຮົມການເມືອງ-ແນວຄິດ ກ່ຽວກັບວຽກງານ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃຫ້ເລິກເຊິ່ງ, ກວ້າງຂວາງ ແລະເຂົ້າເຖິງທຸກເປົ້າໝາຍ; ປຸກລະດົມກຳລັງແຮງສັງລວມ ແລະຍູ້ແຮງຂະບວນການ ຂອງປະຊາຊົນ ເຂົ້າຮ່ວມຈັດຕັ້ງປະຕິບັດ ແນວທາງປ້ອງ

ກັນຊາດ-ປ້ອງກັນຄວາມສະຫງົບ ທົ່ວປວງຊົນຮອບດ້ານ, ຮູ້ຈຳແນກແຈ້ງ ມິດ-ສັດຕູ, ບໍ່ຖືກຕົກເປັນເຄື່ອງມືຮັບໃຊ້ຄົນບໍ່ດີ;

- ສືບຕໍ່ທຸ້ມກຳລັງລົງສູ່ຮາກຖານ, ປັບປຸງ ແລະ ກໍ່ສ້າງຮາກຖານການເມືອງ ຕາມ 4 ເນື້ອໃນ 4 ຄາດໝາຍ ໃຫ້ແຂງແຮງ ແລະ ມີປະສິດທິຜົນກວ່າເກົ່າ, ຕ້ອງເອົາວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ຕິດພັນກັບການພັດທະນາ, ຍົກລະດັບຄຸນນະພາບຊີວິດ ຂອງປະຊາຊົນ ໃຫ້ສູງຂຶ້ນ; ໃນການລົງກໍ່ສ້າງຮາກຖານການເມືອງ ໃຫ້ສົມທົບແໜ້ນຄວາມຮັບຜິດຊອບລະຫວ່າງສູນກາງ, ຂະແໜງການ ແລະ ທ້ອງຖິ່ນ ໂດຍມອບໃຫ້ທ້ອງຖິ່ນ ເປັນເຈົ້າການຕົ້ນຕໍ ໃນການທຸ້ມເອົາພະນັກງານ ຂອງຕົນ ລົງກໍ່ສ້າງຮາກຖານການເມືອງ ໃຫ້ເປັນລະບົບ ແລະ ມີຄວາມຕໍ່ເນື່ອງ; ຖືສຳຄັນການປັບປຸງ ກຳລັງ ປກຊ-ປກສ ຢູ່ຮາກຖານໃຫ້ເຂັ້ມແຂງ, ປອດໃສ, ມີຄວາມສາມາດພຽງພໍ ໃນການຮັກສາຄວາມສະຫງົບ ແລະ ແກ້ໄຂບັນຫາຫຍໍ້ທໍ້ຕ່າງໆ ຢູ່ຮາກຖານ;

- ສືບຕໍ່ນຳພາການປັບປຸງຮາກຖານການເມືອງ ຢູ່ຕາມສຳນັກງານ, ໂຮງຈັກ, ໂຮງງານ, ຫົວໜ່ວຍທຸລະກິດໃຫຍ່, ໂຮງຮຽນ, ໂຮງໝໍ ແລະ ສະຖາບັນການສຶກສາຊັ້ນສູງຕ່າງໆ ໃຫ້ມີຄວາມໜັກແໜ້ນ, ເຂັ້ມແຂງ;

- ເອົາໃຈໃສ່ຄຸ້ມຄອງ, ຕິດຕາມ ແລະ ກວດກາ ການເຄື່ອນໄຫວ ຂອງບັນດາອົງການ INGOs, NGOs, ສັງຄົມພົນລະເຮືອນ, ອົງການສາສະໜາ ທີ່ມີເປົ້າໝາຍການເຄື່ອນໄຫວແອບແຝງສ້າງໜໍ່ແໜງຄວາມບໍ່ສະຫງົບ, ສ້າງຄວາມແຕກແຍກໃນສັງຄົມ ໂດຍມອບໃຫ້ແຕ່ລະທ້ອງຖິ່ນ ເປັນເຈົ້າການ ໃນການຈັດຕັ້ງປະຕິບັດ, ບັນຫາເກີດຂຶ້ນຢູ່ໃສ ແມ່ນໃຫ້ທ້ອງຖິ່ນນັ້ນ ເປັນເຈົ້າການຮີບຮ້ອນແກ້ໄຂໂດຍໄວ; ຕ້ານອາດຊະຍະກຳທາງລະບົບອິນເຕີເນັດ, ຄຸ້ມຄອງສື່ສັງຄົມອອນລາຍ ແລະ ການປ້ອງກັນໄພຈາກລະບົບໄຊເບີ;

- ເພີ່ມທະວີການປ້ອງກັນ, ສະກັດກັ້ນ ແລະ ແກ້ໄຂໜໍ່ແໜງຄວາມບໍ່ສະຫງົບ ຢູ່ຮາກຖານ, ເຂດທຸ່ງພຽງ, ເຂດຫ່າງໄກສອກຫຼີກ, ເຂດຊົນນະບົດພູດອຍ, ເຂດຊາຍແດນ ແລະ ເຂດຍຸດທະສາດອື່ນໆ ໃຫ້ມີການຫັນປ່ຽນຢ່າງຈະແຈ້ງ; ເອົາໃຈໃສ່ຄຸ້ມຄອງທີ່ດິນ ປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໃຫ້ດີກວ່າເກົ່າ ເພື່ອຈຳກັດ ແລະ ແກ້ໄຂບັນຫາຂໍ້ຂັດແຍ່ງ ການບຸກລຸກເຂດດັ່ງກ່າວ;

- ປັບປຸງ, ສ້າງນິຕິກຳ ທີ່ມີຄວາມຈຳເປັນ ເພື່ອແກ້ໄຂບັນຫາຊໍ້າເຮື້ອ ແກ້ບໍ່ຕົກ ເຊັ່ນ: ການຄຸ້ມຄອງອາວຸດເສິກ, ອາວຸດລ່າເນື້ອ ແລະ ອາວຸດປະເພດຕ່າງໆ; ກຳແໜ້ນຂໍ້ມູນ ແລະ ແກ້ໄຂບັນຫາການຊື້-ຂາຍອາວຸດເສິກ ໃຫ້ເດັດຂາດ ແລະ ຂາດຕົວ;

- ສືບຕໍ່ປະຕິບັດມາດຕະການຈຳເປັນ ເພື່ອບັງຄັບໃຊ້ກົດໝາຍ ໃຫ້ເຂັ້ມງວດ ໃນການຄຸ້ມຄອງການຈະລາຈອນ, ແກ້ໄຂອຸບັດຕິເຫດຕາມທ້ອງຖະໜົນ, ນັບທັງການບັນທຸກເກີນນໍ້າໜັກທີ່ພາໃຫ້ເສັ້ນທາງເປ່ເພເປ່ເປື້ອນ ແລະ ເປັນໜຶ່ງໃນບັນດາສາເຫດກໍ່ໃຫ້ເກີດອຸບັດຕິເຫດ;

- ສືບຕໍ່ເພີ່ມທະວີການຮ່ວມມືກັບຕ່າງປະເທດ ໂດຍສະເພາະ ການພົວພັນຮ່ວມມືຮອບດ້ານ ກັບເພື່ອນມິດຍຸດທະສາດ ແລະ ປະເທດເພື່ອນມິດອື່ນໆ ທີ່ມີມູນເຊື້ອຊ່ວຍເຫຼືອເຊິ່ງກັນ ແລະ ກັນມາແລ້ວ;

2). ສືບຕໍ່ຍຶດໝັ້ນແນວທາງການຕ່າງປະເທດ ສັນຕິພາບ, ເອກະລາດ, ມິດຕະພາບ ແລະ ການຮ່ວມມື ເພື່ອພັດທະນາ, ຖື "ການທູດປ້ອງກັນເຫດ ແລະ ບຸກທະລຸ ເພື່ອປົກປັກຮັກສາ ແລະ ສ້າງສາປະເທດຊາດ" ເປັນທິດສຳຄັນ; ສືບຕໍ່ຍຶດໝັ້ນຫຼັກການເຄື່ອນໄຫວວຽກງານຕ່າງປະເທດແບບປິ່ນນວນ, ມີໄຫວພິບ, ຄ່ອງແຄ້ວ ແລະປະດິດສ້າງ ກໍຄືການເຮັດບົດບາດ "ໄກ່ເກ່ຍ"...ບົນພື້ນຖານການເຊີດຊູຄວາມເປັນເອກະລາດແຫ່ງຊາດ, ເປັນເຈົ້າຕົນເອງ, ຕ່າງຝ່າຍຕ່າງມີຜົນ

ປະໂຫຍດ, ບໍ່ແຊກແຊງເຂົ້າກິດຈະການພາຍໃນ ຂອງກັນ ແລະ ກັນ, ປະກອບສ່ວນເຂົ້າໃນການປົກປັກຮັກສາສັນຕິພາບ, ສະຖຽນລະພາບ, ມິດຕະພາບ ແລະການຮ່ວມມື ເພື່ອການພັດທະນາ ຢູ່ພາກພື້ນ ແລະ ສາກົນ, ສ້າງເງື່ອນໄຂສະດວກ ແລະ ນຳຜົນປະໂຫຍດຕົວຈິງ ມາໃຫ້ແກ່ການພັດທະນາ ປະເທດຊາດ;

ກອງປະຊຸມ ໄດ້ໃຫ້ທິດຊີ້ນຳສຳຄັນຈຳນວນໜຶ່ງ ໃຫ້ແກ່ການສືບຕໍ່ເຄື່ອນໄຫວວຽກງານການຕ່າງປະເທດ ໃນຕໍ່ໜ້າ ດັ່ງນີ້:

- ປັບປຸງ, ຍົກສູງຄຸນນະພາບ ວຽກງານເສນາທິການ ຂອງຂະແໜງການຕ່າງປະເທດ ຢູ່ແຕ່ລະຂັ້ນ ໃຫ້ຄະນະພັກ-ອົງການປົກຄອງລັດ ໂດຍເອົາໃຈໃສ່ຕິດຕາມ ສະພາບການ, ແລກປ່ຽນ-ກຳແໜ້ນຂໍ້ມູນຂ່າວສານ ດ້ານການຕ່າງປະເທດ ຢ່າງເປັນລະບົບ ແລະ ຕໍ່ເນື່ອງ ໂດຍສະເພາະບັນຫາທີ່ສົ່ງຜົນກະທົບໂດຍກົງຕໍ່ ສປປ ລາວ ເພື່ອວາງມາດຕະການປ້ອງກັນ ແລະ ວິທີແກ້ໄຂ ແຕ່ຫົວທີ;

- ສ້າງແຜນຍຸດທະສາດການຕ່າງປະເທດ ໄລຍະຍາວ, ກຳນົດຍຸດທະສາດການຕ່າງປະເທດ ຂອງຂະແໜງການຕ່າງໆ ແຕ່ຂັ້ນສູນກາງຮອດທ້ອງຖິ່ນໃຫ້ກົມກຽວກັນ, ລວມສູນ ແລະເປັນເອກະພາບ; ການເຄື່ອນໄຫວວຽກງານການຕ່າງປະເທດ ຜ່ານລະບົບປະຕູດຽວ ໃຫ້ໄດ້ດີ ແລະ ວ່ອງໄວ;

- ເອົາໃຈໃສ່ແກ້ໄຂ ແລະ ສ້າງຄວາມດຸນດ່ຽງ ລະຫວ່າງການເຄື່ອນໄຫວດ້ານການເມືອງກັບການຍາດແຍ່ງ ແລະ ຍູ້ແຮງດ້ານເສດຖະກິດ-ການຄ້າ, ນັບທັງການໂຄສະນາເຜີຍແຜ່, ດຶງດູດ, ຍາດແຍ່ງ ດ້ານວັດທະນະທຳ-ສັງຄົມ ໃຫ້ແຂງແຮງ, ເຂົ້າສູ່ລວງເລິກກວ່າເກົ່າ;

- ເຊີດຊູສະຕິຊາດ ແລະ ຈິດໃຈເອກະລາດ, ເປັນເຈົ້າຕົນເອງ, ເພິ່ງຕົນເອງ, ກຸ້ມຕົນເອງ, ນຳໃຊ້ທ່າແຮງພາຍນອກ ໃຫ້ເປັນປັດໃຈສົ່ງເສີມ ແລະ ເສີມຂະຫຍາຍທ່າແຮງພາຍໃນ ຢ່າງມີປະສິດທິຜົນສູງ; ພ້ອມນັ້ນ ກໍຕ້ອງເຫັນແຈ້ງທາດແທ້, ກົນອຸບາຍຫັນປ່ຽນໂດຍສັນຕິ ຂອງອິດທິກຳລັງປໍລະປັກ ແລະ ພວກຄົນບໍ່ດີ ທີ່ສວຍໃຊ້ການພົວພັນຮ່ວມມືກັບສາກົນ ເປັນເຄື່ອງມືບ່ອນທຳລາຍປະເທດເຮົາ;

- ຍຶດໝັ້ນທັດສະນະ, ແນວທາງການຕ່າງປະເທດຫຼາຍຝ່າຍ, ຫຼາຍລະດັບ, ຫຼີກລ່ຽງການເລືອກຂ້າງ, ການເຄື່ອນໄຫວວຽກງານຕ່າງປະເທດ ຕ້ອງຄຳນຶງ ແລະ ຮັບປະກັນຜົນປະໂຫຍດລວມ ຂອງປະເທດຊາດ ກໍຄືຂະບວນການຕໍ່ສູ້ເພື່ອຄວາມກ້າວໜ້າ ຢູ່ໃນໂລກ; ສືບຕໍ່ຕັ້ງໜ້າດຶງດູດ, ຍາດແຍ່ງເອົາການຮ່ວມມື, ການຊ່ວຍເຫຼືອຈາກປະເທດເພື່ອນມິດເກົ່າ ໃນໄລຍະຜ່ານມາ, ຖືເອົາການພົວພັນສອງຝ່າຍເປັນຕົ້ນຕໍ, ຫຼີກລ່ຽງການເຂົ້າຮ່ວມກຸ່ມພັນທະມິດຕ່າງໆ;

- ສືບຕໍ່ເຄື່ອນໄຫວດ້ານພັກ ຕາມກົນໄກທີ່ມີແລ້ວ, ພ້ອມທັງ ສ້າງກົນໄກ, ວິທີການໃໝ່ຂຶ້ນຕື່ມ ເພື່ອສ້າງກຳລັງແຮງໃຫ້ແກ່ການເຄື່ອນໄຫວວຽກງານການທູດ, ການຕ່າງປະເທດ ລວມທັງການທູດພາກປະຊາຊົນ (ມະຫາຊົນ);

- ສືບຕໍ່ຮ່ວມມືຈັດຕັ້ງປະຕິບັດ ບັນດາໂຄງການມະນຸດສະທຳ ທີ່ໄດ້ຕົກລົງປະຕິບັດຮ່ວມກັບປະເທດ ແລະ ອົງການຈັດຕັ້ງສາກົນກ່ຽວຂ້ອງຕ່າງໆ ໃຫ້ສຳເລັດ ເປັນຕົ້ນ ໂຄງການເກັບກູ້ລະເບີດບໍ່ທັນແຕກ, ໂຄງການຊອກຄົ້ນກະດູກ ແລະ ສິ່ງເສດເຫຼືອຈາກສົງຄາມ;...

- ສືບຕໍ່ເປັນເຈົ້າການແກ້ໄຂບັນຫາຊາຍແດນ ກໍຄື ຄວາມບໍ່ເປັນລະບຽບຮຽບຮ້ອຍ ລຽບຕາມຊາຍແດນກັບປະເທດເພື່ອນບ້ານໃກ້ຄຽງ ດ້ວຍມາດຕະການຕ່າງໆ ທີ່ເໝາະສົມ ເພື່ອຊຸກຍູ້ໃຫ້ເກີດການຈັດຕັ້ງປະຕິບັດ ໂດຍໄວ.

**3. ກ່ຽວກັບການດຳເນີນຊີວິດການເມືອງ ພາຍໃນຄະນະບໍລິຫານງານສູນກາງພັກ ປະຈຳປີ 2021.**

ກອງປະຊຸມ ຄົບຄະນະຄັ້ງນີ້ ແມ່ນເປັນຄັ້ງທຳອິດ ທີ່ບັນດາສະຫາຍກຳມະການສູນກາງພັກ ສະໄໝທີ XI ໄດ້ສຳຫຼວດ, ກວດກາ ການນຳພາຊີ້ນຳລວມ ຂອງຄະນະບໍລິຫານງານສູນກາງພັກ ແລະການເຄື່ອນໄຫວປະຕິບັດໜ້າທີ່ການເມືອງ ຂອງແຕ່ລະສະຫາຍ ນັບແຕ່ກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ ໃນຕົ້ນປີ 2021 ເປັນຕົ້ນມາ ເພື່ອສຳຫຼວດ, ກວດກາ ຄວາມຮັບຜິດຊອບການເມືອງ ໃນການນຳພາຊີ້ນຳການຜັນຂະຫຍາຍ ແລະ ການຈັດຕັ້ງປະຕິບັດ ມະຕິ XI ຂອງພັກ ກໍຄືມະຕິ, ຄຳສັ່ງຕ່າງໆ ຂອງສູນກາງພັກ ໃຫ້ປະກົດເປັນຈິງ, ພ້ອມທັງຊີ້ໃຫ້ເຫັນຈຸດອ່ອນ-ຂໍ້ຄົງຄ້າງ ແລະ ທິດທາງປັບປຸງແກ້ໄຂ ໃນຕໍ່ໜ້າ ບົນຈິດໃຈສ້າງການຫັນປ່ຽນທີ່ແຂງແຮງ, ເລິກເຊິ່ງ ແລະ ຮອບດ້ານ ໃນທຸກຂົງເຂດວຽກງານ;

ການດຳເນີນຊີວິດການເມືອງຄັ້ງນີ້ ໄດ້ດຳເນີນໄປດ້ວຍບັນຍາກາດຟົດຟື້ນ, ເສີມຂະຫຍາຍປະຊາທິປະໄຕ ໄດ້ເປັນຢ່າງດີ; ບັນດາສະຫາຍ ສູນກາງພັກ ໄດ້ຍົກສູງສະຕິ ແລະ ຄວາມຮັບຜິດຊອບ ຕໍ່ພັກ, ຕໍ່ປະເທດຊາດ ປະກອບຄຳເຫັນ ຕຳນິສິ່ງຂາວ ແລະ ສະແດງຄວາມເປັນຫ່ວງເປັນໄຍ ຕໍ່ບັນຫາລວມ ຂອງພັກ, ຂອງປະເທດຊາດ ດ້ວຍຄວາມບໍລິສຸດໃຈ ແລະ ເປັນປະໂຫຍດໃຫ້ແກ່ການສືບຕໍ່ປັບປຸງແກ້ໄຂການເຄື່ອນໄຫວນຳພາຊີ້ນຳ ແລະ ການແກ້ໄຂບັນຫາຕົວຈິງ ຂອງຄະນະບໍລິຫານງານສູນກາງພັກ ໂດຍລວມ ກໍຄື ຂອງຂະແໜງການ, ອົງການ ແລະ ທ້ອງຖິ່ນ ທີ່ຕົນຮັບຜິດຊອບ ເຊິ່ງສັງລວມໄດ້ບັນຫາສຳຄັນຈຳນວນໜຶ່ງ ຄື: ການນຳພາຊີ້ນຳ ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດມະຕິ XI ຂອງພັກ, ກົດລະບຽບພັກ ສະໄໝທີ XI, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX ຢູ່ຫຼາຍຂະແໜງການ ແລະ ທ້ອງຖິ່ນ ຍັງຊັກຊ້າ, ເນື້ອໃນບໍ່ທັນເລິກເຊິ່ງ, ການສ້າງແຜນຜັນຂະຫຍາຍ ຍັງລວມໆ, ບໍ່ທັນມີຈຸດສຸມ ໃນການແກ້ໄຂບັນຫາຕົວຈິງ ກໍຄື ບໍ່ທັນສະແດງອອກຢ່າງເປັນຮູບປະທຳ ກ່ຽວກັບຄວາມຕັດສິນໃຈອັນເດັດດ່ຽວ-ເດັດຂາດ, ຄວາມຄິດຫັນປ່ຽນໃໝ່ອັນຈະແຈ້ງ ກໍ່ຄືການປະດິດສ້າງດ້ານວິທີຈັດຕັ້ງປະຕິບັດຕົວຈິງ. ການເຄື່ອນໄຫວນຳພາຊີ້ນຳ ເສີມຂະຫຍາຍກຳລັງແຮງ ຂອງທົ່ວສັງຄົມ ເຂົ້າໃນການແກ້ໄຂບັນຫາຢາເສບຕິດ ຕາມບັນດາເນື້ອໃນວາລະແຫ່ງຊາດ ກໍຄືການແກ້ໄຂ ບັນດາປະກົດການຫຍໍ້ທໍ້ໃນກົງຈັກ ແລະ ໃນສັງຄົມ ຍັງຊັກຊ້າ, ຍັງຢູ່ໃນສະພາບເຮັດແບບລວມໆ ບໍ່ທັນກາຍເປັນບັນຍາກາດແຫ່ງການເຮັດແທ້ທຳຈິງແຕ່ຫົວທີ. ການນຳພາຊີ້ນຳແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ເຖິງວ່າໄດ້ຖືກຮັບຮອງເປັນວາລະແຫ່ງຊາດແລ້ວ ແຕ່ຍັງຂາດການປຸກລະດົມໃຫ້ເກີດຂະບວນການເຄື່ອນໄຫວຕົວຈິງ, ໃນນັ້ນ ຄະນະນຳ ຂອງກະຊວງ, ອົງການ ແລະ ທ້ອງຖິ່ນ ສ່ວນຫຼາຍຍັງບໍ່ທັນສາມາດຄົ້ນຄວ້າ ຜັນຂະຫຍາຍຢ່າງເລິກເຊິ່ງ, ກຳນົດ ແລະ ປະຕິບັດໜ້າວຽກຕົວຈິງໃຫ້ມີລັກສະນະບຸກທະລຸຢ່າງຈະແຈ້ງ. ການແກ້ໄຂ ແລະ ຕີຖອຍປະກົດການສວຍໃຊ້ໜ້າທີ່ ເພື່ອຫາຜົນປະໂຫຍດສ່ວນຕົວ ຂອງເຈົ້າໜ້າທີ່ລັດ ຍັງບໍ່ທັນມີຄວາມຄືບໜ້າຈະແຈ້ງ, ເດັດຂາດ ໃນທຸກລະດັບ ໂດຍສະເພາະໃນຂົງເຂດທີ່ມີຄວາມຫຼໍ່ແຫຼມສູງ. ການຮັບມື ແລະ ແກ້ໄຂຄວາມຫຍຸ້ງຍາກການຮຽນ-ການສອນໃນລະບົບການສຶກສາ ຍັງຂາດຄວາມເປັນເຈົ້າການ, ເປັນສິ່ງທ້າທາຍ ນັບທັງການຈັດຕັ້ງການຮຽນ-ການສອນຜ່ານລະບົບ Online ກໍ່ຍັງມີລັກສະນະຕາບຈູນ, ບໍ່ຮັບປະກັນຄຸນນະພາບ; ການນຳໃຊ້ສື່ມວນຊົນ, ນັບທັງເຄືອຂ່າຍສື່ສັງຄົມ Online ເຂົ້າໃນການໂຄສະນາສ້າງຄວາມເຂົ້າໃຈ ແລະ ປຸກລະດົມໃຫ້ສັງຄົມເປັນເຈົ້າ ກໍຄືການຕອບໂຕ້ການໂຄສະນາໃສ່ຮ້າຍປ້າຍສີ ຂອງອິດທິກຳລັງປໍລະປັກ ຍັງບໍ່ທັນໄດ້ຮັບການຈັດຕັ້ງປະຕິບັດຢ່າງແຂງແຮງ ແລະ ມີປະ

ສິດທິພາບ. ການນຳພາປັບປຸງການແບ່ງຂັ້ນຄຸ້ມຄອງບໍລິຫານລັດ, ບັນຫາການປັບປຸງດ້ານນິຕິກຳຍັງບໍ່ທັນລະອຽດ ຈະແຈ້ງ. ການປັບປຸງແກ້ໄຂແບບແຜນການນຳພາ ແລະ ວິທີເຮັດວຽກຂອງລະບົບການຈັດຕັ້ງພັກ ຍັງບໍ່ທັນໄດ້ຮັບການຊີ້ນຳປະຕິບັດ ຢ່າງຈິງຈັງ ແລະ ແຂງແຮງ; ການຊີ້ນຳປັບປຸງ ເພື່ອສ້າງຄວາມເຂັ້ມແຂງ ຂອງວຽກງານກວດກາ ການປະຕິບັດວິໄນ ຂອງພັກ, ກົດໝາຍຂອງລັດ ແລະ ການຕ້ານ-ສະກັດກັ້ນການສໍ້ລາດບັງຫຼວງ ໂດຍລວມຍັງມີລັກສະນະອີດອາດຊັກຊ້າ ບໍ່ທັນມີຈຸດສຸມ, ການແກ້ໄຂຜົນ ຂອງການກວດກາ ກໍ່ຄື ຜົນການກວດສອບ ສືບຕໍ່ແກ່ຍາວ ແລະ ມີຄວາມຫຍຸ້ງຍາກສັບສົນ ແລະ ອື່ນໆ;

ຄະນະບໍລິຫານງານສູນກາງພັກ ມອບໃຫ້ຄະນະກວດກາສູນກາງພັກ ສັງລວມຄຳຄິດຄຳເຫັນດັ່ງກ່າວ ເພື່ອເປັນພື້ນຖານປັບປຸງບົດສຳຫຼວດການນຳພາລວມ ຂອງຄະນະບໍລິຫານງານສູນກາງພັກ ປະຈຳປີ 2021 ເພື່ອໃຫ້ບັນດາສະຫາຍກຳມະການສູນກາງພັກ ນຳໄປຄົ້ນຄວ້າເປັນທິດ ໃນການຊີ້ນຳ ແລະປັບປຸງແກ້ໄຂວຽກງານ ຂອງຕົນ;

ບົນຈິດໃຈແຫ່ງການຕຳນິຕິຊົມເຊິ່ງກັນ ແລະ ກັນ ເຊິ່ງແມ່ນໜຶ່ງໃນຫຼັກການກໍ່ສ້າງພັກປະຕິວັດ, **“ເປັນກົດເກນແຫ່ງການຄົງຕົວ ແລະ ຂະຫຍາຍຕົວ ຂອງພັກ”** ນັ້ນ, ສະຫາຍກຳມະການສູນກາງພັກ ໄດ້ຕັ້ງໜ້າ ແລະ ເປັນເຈົ້າການ, ກ້າຫານ, ຈິງໃຈ ຕິຊົມຕົນເອງ ແລະ ປະກອບຄຳຄິດຄຳເຫັນ ຊ່ວຍເຫຼືອເຊິ່ງກັນ ແລະ ກັນ ຖານສະຫາຍອ້າຍນ້ອງ ດ້ວຍຄວາມຈິງໃຈ, ສ້າງສັນ, ແຕ່ພ້ອມກັນນັ້ນ ກໍຍັງມີສະຫາຍຈຳນວນໜຶ່ງ ອອກຄຳເຫັນແບບລວມໆ, ບໍ່ທັນກ້າເວົ້າກັນ, ເວົ້າແຕ່ດ້ານດີ, ບໍ່ທັນຍົກໃຫ້ເຫັນບັນຫາຢ່າງເລິກເຊິ່ງ ຕາມຈິດໃຈຊີ້ນຳ ຂອງການດຳເນີນຊີວິດການເມືອງເທື່ອນີ້ ເຊິ່ງອາດຍ້ອນການກຳສະພາບກັນ ບໍ່ທັນແໜ້ນ;

ຄະນະບໍລິຫານງານສູນກາງພັກ ໄດ້ເປັນເອກະພາບ ຢືນຢັນວ່າ ຕ້ອງນຳເອົາທິດຊີ້ນຳ ຕໍ່ບັນຫາຕ່າງໆທີ່ໄດ້ຍົກຂຶ້ນໃນວາລະປະຊຸມ ແລະ ຜົນການດຳເນີນຊີວິດການເມືອງ ໃນຄັ້ງນີ້ໃຫ້ເຂົ້າສູ່ການກະທຳຕົວຈິງ, ເພີ່ມທະວີຄວາມສາມັກຄີ ເປັນປຶກແຜ່ນແໜ້ນໜາ, ຮ່ວມແຮງຮ່ວມໃຈກັນ ເປັນຈິດໜຶ່ງໃຈດຽວໃນໝູ່ຄະນະ, ຕັດສິນໃຈສູງ ຕໍ່ສິ່ງທີ່ຄະນະບໍລິຫານງານສູນກາງພັກ ໄດ້ຕົກລົງເປັນເອກະພາບ ແລະ ມີທິດຊີ້ນຳແລ້ວ ໂດຍສະເພາະແມ່ນ“ສອງວາລະແຫ່ງຊາດ” ແລະ “ການສ້າງການຫັນປ່ຽນ ຢ່າງແຂງແຮງ ແລະ ເລິກເຊິ່ງ ວຽກງານພະນັກງານ” ເພື່ອຫັນເປັນການກະທຳ ແລະ ໃຫ້ເປັນຮູບປະທຳຕົວຈິງ, ເປັນຫຼັກແຫຼ່ງນຳພາ ແກ້ໄຂບັນຫາ ແລະ ສ້າງການຫັນປ່ຽນໃໝ່ໃຫ້ເກີດຂຶ້ນ ຢູ່ຂະແໜງການ, ອົງການ ແລະ ທ້ອງຖິ່ນ ຂອງຕົນ, ເພີ່ມທະວີຄວາມອົດທົນສູ້ຊົນ, ຍົກສູງນ້ຳໃຈເສຍສະຫຼະ, ມານະຈິດປະຕິວັດບຸກ, ຜ່ານຜ່າຄວາມຫຍຸ້ງຍາກສັບສົນຕ່າງໆໃຫ້ໄດ້; ມີແຕ່ຄະນະບໍລິຫານງານສູນກາງພັກ ເຮັດໄດ້ແນວນັ້ນ ຈຶ່ງຈະກອບກູ້ ແລະ ສ້າງຄວາມເຊື່ອໝັ້ນສັດທາ ຈາກສະມາຊິກພັກ ແລະ ປະຊາຊົນລາວບັນດາເຜົ່າໄດ້.

**4. ນອກຈາກວຽກງານຕົ້ນຕໍຈຳນວນໜຶ່ງ ທີ່ຄະນະບໍລິຫານງານສູນກາງພັກ ສະໄໝທີ XI ຕ້ອງສຸມໃສ່ນຳພາຊີ້ນຳ ໃນປີ 2022 ເຊິ່ງກຳນົດໄວ້ໃນບົດສຳຫຼວດການນຳພາລວມ ຂອງສູນກາງພັກ, ກອງປະຊຸມ ໄດ້ເປັນເອກະພາບ ວາງວຽກງານຈຸດສຸມ ແຕ່ນີ້ຮອດກອງປະຊຸມຄົບຄະນະຄັ້ງທີ 4** ໂດຍມອບໃຫ້ກົມການເມືອງສູນກາງພັກ ແລະ ຄະນະເລຂາທິການສູນກາງພັກ ເປັນຜູ້ຊີ້ນຳ ການພັນຂະຫຍາຍ, ຈັດຕັ້ງປະຕິບັດ ດັ່ງນີ້:

(1). ສືບຕໍ່ຊີ້ນຳ ຢ່າງເອົາການເອົາງານ, ແທດຕົວຈິງ ແລະ ເຮັດໃຫ້ເຫັນຜົນທີ່ເປັນຮູບປະທຳ ກ່ຽວກັບການປ້ອງກັນ ແລະ ແກ້ໄຂ ພະຍາດໂຄວິດ-19; ຮັບປະກັນດ້ານຊີວິດ ແລະ ສຸຂະພາບ ຂອງປະຊາຊົນ, ຮັບປະກັນການສ້າງສາພັດທະນາ, ຟື້ນຟູເສດຖະກິດ-ສັງຄົມ, ຮັບປະກັນ

ການດຳລົງຊີວິດ-ທຳມາຫາກິນ, ດຳເນີນການຜະລິດ-ທຸລະກິດ ຂອງປະຊາຊົນ; ຮັບປະກັນສະຖຽນລະພາບດ້ານການເມືອງ ແລະ ຄວາມສະຫງົບສຸກປອດໄພ ທາງສັງຄົມ, ເດັດຂາດ ບໍ່ໃຫ້ມີການປັ່ນປ່ວນ, ສ້າງຄວາມວຸ້ນວາຍຕ່າງໆ;

ມອບໃຫ້ລັດຖະບານ, ຄະນະສະເພາະກິດຂັ້ນສູນກາງ ແລະ ບັນດາທ້ອງຖິ່ນ ສົມທົບກັນແໜ້ນ ເພື່ອປະເມີນ, ຕີລາຄາ ສະພາບການລະບາດ ຢ່າງຖີ່ຖ້ວນ, ຮອບດ້ານ ເພື່ອວາງແຜນປ້ອງກັນ, ສະກັດກັ້ນ, ຄວບຄຸມ ແລະ ແກ້ໄຂ ການລະບາດພະຍາດໂຄວິດ-19 ໃຫ້ຈະແຈ້ງ ແລະ ສອດຄ່ອງກັບເງື່ອນໄຂ, ຄວາມສາມາດຕົວຈິງ ຂອງປະເທດເຮົາ;

(2). ສືບຕໍ່ຊີ້ນຳການເຊື່ອມຊຶມ, ຜັນຂະຫຍາຍ ມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ໃຫ້ເລິກເຊິ່ງ ແລະ ສູລວງເລິກ ຕິດພັນກັບການຈັດຕັ້ງປະຕິບັດ ສອງວາລະແຫ່ງຊາດ ກໍຄື ບັນດາຄາດໝາຍ ແລະ ວຽກຈຸດສຸມຕ່າງໆທີ່ກຳນົດໄວ້ ໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ ໄຕມາດສຸດທ້າຍ ປີ 2021 ແລະ ທິດທາງແຜນການ ປີ 2022 ໃຫ້ໄດ້ຮັບຜົນດີ;

(3). ເພີ່ມທະວີການຊີ້ນຳ, ຊຸກຍູ້, ຕິດຕາມ, ກວດກາ ການເຄື່ອນໄຫວວຽກງານ ແລະ ການປັບປຸງແບບແຜນວິທີເຮັດວຽກ ຂອງຄະນະພັກແຕ່ລະຂັ້ນ ຕິດພັນກັບການຊີ້ນຳ ປັບປຸງກົງຈັກເສນາທິການ ຂອງຕົນ ໃຫ້ໜັກແໜ້ນ, ເຂັ້ມແຂງ ແນໃສ່ສ້າງຄວາມເປັນເອກະພາບ ແລະ ຕັດສິນໃຈສູງ ໃນການແກ້ໄຂບັນຫາຕົວຈິງ ເພື່ອສ້າງການຫັນປ່ຽນທີ່ແຂງແຮງ, ເລິກເຊິ່ງ, ຮອບດ້ານ ຢູ່ແຕລະຂະແໜງການ, ອົງການ ແລະ ທ້ອງຖິ່ນ-ຮາກຖານ;

(4). ສືບຕໍ່ຊີ້ນຳການກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ ຂອງບັນດາອົງຄະນະພັກ ກະຊວງ, ອົງການ ຈຳນວນໜຶ່ງ, ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຂອງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ສະຫະພັນແມ່ຍິງລາວ, ກອງປະຊຸມວຽກງານຈັດຕັ້ງ, ວຽກງານກວດກາ,.... ໃຫ້ມີຜົນສຳເລັດ ຕາມຄາດໝາຍ; ຊີ້ນຳການກວດກາ, ຕີລາຄາ, ປະເມີນຄືນຕື່ມ ກ່ຽວກັບວຽກງານກໍ່ສ້າງຮາກຖານການເມືອງ ຕິດພັນກັບການພັດທະນາຊົນນະບົດຮອບດ້ານ;

(5). ສືບຕໍ່ຊີ້ນຳການກະກຽມເປີດ ແລະ ນຳໃຊ້ ລົດໄຟ ລາວ-ຈີນ ໃຫ້ເກີດຜົນປະໂຫຍດສູງສຸດ ດ້ວຍການຮັບຮອງຜັນຂະຫຍາຍ ແຜນຍຸດທະສາດ, ນະໂຍບາຍພັດທະນາ ອັນລວມທີ່ໄດ້ຕົກລົງກັນແລ້ວ ໃນຂອບການຮ່ວມມື ລາວ-ຈີນ ໂດຍຫັນເປັນອັນລະອຽດ ຂອງແຕ່ລະຂະແໜງການ ແລະ ທ້ອງຖິ່ນ;

(6). ສືບຕໍ່ຊີ້ນຳ ການຕິດຕາມສະພາບການພາກພື້ນ ແລະ ສາກົນ ໃຫ້ໃກ້ຊິດ ເພື່ອຄົ້ນຄວ້າ, ວິເຄາະ, ວິໄຈ ບັນຫາ ທີ່ອາດສົ່ງຜົນກະທົບ ຕໍ່ປະເທດຊາດ; ພ້ອມນັ້ນ ກໍຊີ້ນຳການກະກຽມໃຫ້ແກ່ການໄປເຄື່ອນໄຫວທາງລັດຖະການ ຢູ່ປະເທດເພື່ອນມິດຍຸດທະສາດ ຂອງການນຳ ພັກ-ລັດ, ການຕ້ອນຮັບການມາຢ້ຽມຢາມ ແລະເຮັດວຽກ ຂອງຜູ້ນຳປະເທດເພື່ອນມິດຈຳນວນໜຶ່ງ, ທັງຊີ້ນຳການຈັດຕັ້ງຜັນຂະຫຍາຍຂໍ້ຕົກລົງ, ສັນຍາການຮ່ວມມືຕ່າງໆ ໃຫ້ເກີດໝາກອອກຜົນເປັນຈິງ;

(7). ຊີ້ນຳ ການຄົ້ນຄວ້າ, ວິໄຈ, ປະເມີນ, ຕີລາຄາບັນຫາສຳຄັນຍຸດທະສາດ, ແຜນນະໂຍບາຍໃຫຍ່ ຈຳນວນໜຶ່ງ ຕາມແຜນດຳເນີນງານ ຂອງສູນກາງພັກ ສະໄໝທີ XI ເພື່ອສະເໜີຕໍ່ກອງປະຊຸມຄົບຄະນະ ຄັ້ງທີ 4 ພິຈາລະນາ ແລະ ໃຫ້ທິດຊີ້ນຳ ເຊິ່ງຄາດຄະເນຫົວຂໍ້ ດັ່ງນີ້:

- ການຄົ້ນຄວ້າ ທິດສະດີ ແລະ ສະຫຼຸບພຶດຕິກຳ ໃຫ້ແກ່ການສ້າງປະຖົມປັດໄຈ ເພື່ອກ້າວເດີນສູ່ຈຸດໝາຍສັງຄົມນິຍົມ;

- ການເສີມຂະຫຍາຍທ່າແຮງ, ຄວາມສາມາດບົ່ມຊ້ອນ ໃຫ້ກາຍເປັນຂະແໜງເສດຖະກິດປາຍແຫຼມ;

- ການຊຸກຍູ້, ສົ່ງເສີມ ຜູ້ປະກອບການທຸລະກິດ ຂະໜາດນ້ອຍ-ຂະໜາດກາງ (SME) ແລະ ຈຸນລະວິສາຫະກິດ (MSME) ໃຫ້ມີຄວາມເຂັ້ມແຂງ;

- ການປັບປຸງລະບົບການຈັດຕັ້ງ, ກົງຈັກ ແລະ ກົນໄກການເຄື່ອນໄຫວ ຂອງບັນດາອົງການ ອຳນາດລັດ ໃຫ້ເຂັ້ມແຂງ, ມີປະສິດທິພາບ; ຕິດພັນກັບການຕີລາຄາ ມະຕິ ຂອງຄະນະບໍລິຫານ ງານສູນກາງພັກ ວ່າດ້ວຍການຍົກສູງປະສິດທິພາບການຄຸ້ມຄອງລັດ, ຄຸ້ມຄອງສັງຄົມ ດ້ວຍກົດ ໝາຍ ສະບັບເລກທີ 037/ຄບສພ, ລົງວັນທີ 18 ມິຖຸນາ 2018;

- ເພີ່ມທະວີການສ້າງຊັບພະຍາກອນມະນຸດ ໃຫ້ມີຄຸນນະພາບສູງ.

5. **ຄະນະບໍລິຫານງານສູນກາງພັກ ສະແດງຄວາມເປັນຫ່ວງເປັນໃຍ** ຕໍ່ຄວາມຫຍຸ້ງຍາກ ດ້ານຕ່າງໆໃນການດຳລົງຊີວິດ, ການເຄື່ອນໄຫວປະກອບອາຊີບ-ທຳມາຫາກິນຕ່າງໆ ຂອງປະຊາຊົນ ບັນດາເຜົ່າ ໃນເງື່ອນໄຂທີ່ເກີດຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ, ການລະບາດຂອງ ພະຍາດ ໂຄວິດ-19; ພ້ອມນັ້ນ ກໍສະແດງຄວາມຍ້ອງຍໍຊົມເຊີຍແພດໝໍ, ຄະນະສະເພາະກິດ, ທະ ຫານ, ຕຳຫຼວດ, ພະນັກງານ-ລັດຖະກອນ, ພໍ່ແມ່ປະຊາຊົນ, ຊາວຕ່າງດ້າວ, ຄົນຕ່າງປະເທດທີ່ ອາໄສ ຢູ່ ສປປ ລາວ ທີ່ໄດ້ເອົາໃຈໃສ່ປະຕິບັດມາດຕະການປ້ອງກັນ, ຄວບຄຸມ, ສະກັດກັ້ນ, ແກ້ ໄຂການລະບາດ ຂອງພະຍາດໂຄວິດ-19 ຢ່າງເປັນເຈົ້າການ, ເຮັດໃຫ້ສາມາດຄວບຄຸມສະພາບ ການໄດ້ໃນເບື້ອງຕົ້ນ. ພ້ອມນັ້ນ ກໍສະແດງຄວາມຊົມເຊີຍ ແລະ ຂອບໃຈຢ່າງຈິງໃຈ ໄປຍັງບັນດາ ພັກອ້າຍນ້ອງ, ລັດຖະບານ ແລະ ປະຊາຊົນ ປະເທດເພື່ອນມິດ ທີ່ໄດ້ສະໜັບສະໜູນຊ່ວຍເຫຼືອ ສປປ ລາວ ເຂົ້າໃນວຽກງານປ້ອງກັນ ແລະ ແກ້ໄຂການແຜ່ລະບາດພະຍາດໂຄວິດ-19;

ຄະນະບໍລິຫານງານສູນກາງພັກ, ຮຽກຮ້ອງມາຍັງອົງການຈັດຕັ້ງພັກ-ລັດ ທຸກຂັ້ນ ແລະ ປະຊາຊົນບັນດາເຜົ່າ ຈົ່ງເພີ່ມທະວີຄວາມສາມັກຄີເປັນປຶກແຜ່ນແໜ້ນໜາ, ຍົກສູງຄວາມຮັບ ຜິດຊອບ, ເສີມຂະຫຍາຍມູນເຊື້ອຮັກຊາດ, ກຳແໜ້ນກາລະໂອກາດ, ເງື່ອນໄຂ ແລະປັດໃຈໃໝ່, ການດຳລົງຊີວິດປົກກະຕິແບບໃໝ່ ພ້ອມກັບສຸມສະຕິປັນຍາ, ຫົວຄິດປະດິດສ້າງ ເຂົ້າໃສ່ການແກ້ ໄຂ ແລະ ຜ່ານຜ່າທຸກອຸປະສັກ, ຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ, ການແກ້ໄຂບັນຫາ ຢາເສບຕິດ ແລະ ປະກົດການຫຍໍ້ທໍ້ຕ່າງໆ, ເພີ່ມທະວີການປະຕິບັດມາດຕະການ ປ້ອງກັນ ແລະ ແກ້ໄຂການລະບາດ ຂອງພະຍາດໂຄວິດ-19, ຍູ້ຂະບວນການສ້າງສາພັດທະນາປະເທດຊາດ ໃຫ້ ມີບາດກ້າວຫັນປ່ຽນ ແລະ ຂະຫຍາຍຕົວ ຢ່າງແຂງແຮງ.

ນະຄອນຫຼວງວຽງຈັນ, ວັນທີ 29 ຕຸລາ 2021

ຕ.ຄະນະບໍລິຫານງານສູນກາງພັກ
ເລຂາທິການໃຫຍ່

ທອງລຸນ ສີສຸລິດ